ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 01 ສປປ
ລົງວັນທີ-------

# ລັດຖະບັນຍັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ວ່າດ້ວຍການໃຫ້ນະໂຍບາຍສົ່ງເສີມ
## ການລົງທຶນພາຍໃນ ແລະ ຕ່າງປະເທດ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວໝວດທີ V ມາດຕາ 53 ຂໍ້ 2;
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 017/ຄປຈ, ລົງວັນທີ 20 ພຶດສະພາ 2003, ກ່ຽວກັບການສະເໜີໃຫ້ທ່ານປະທານປະເທດ ອອກລັດຖະບັນຍັດວ່າດ້ວຍການໃຫ້ນະໂຍບາຍ ສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ:

## ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

<u>ມາດຕາ 1</u>: ຈຸດປະສົງ

ລັດຖະບັນຍັດສະບັບນີ້ ວາງອອກເພື່ອຜັນຂະຫຍາຍ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນພາຍໃນ ແລະ ກົດໝາຍວ່າດ້ວຍການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຕ່າງປະເທດ, ສ້າງສະພາບແວດລ້ອມ ເງື່ອນໄຂເອື້ອອຳນວຍທີ່ດີ ເພື່ອກະຕຸກຊຸກຍູ້ ດຶງດູດ ແລະ ສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ໃຫ້ຂະຫຍາຍຕົວຂຶ້ນ ເປັນກ້າວໆ ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຢູ່ ສປປ ລາວ.

<u>ມາດຕາ 2</u>: ການໃຫ້ນະໂຍບາຍສົ່ງເສີມການລົງທຶນ

ຜູ້ລົງທຶນພາຍໃນ ແລະຜູ້ລົງທຶນຕ່າງປະເທດ ທີ່ໄດ້ລົງທຶນຢ່າງຖືກຕ້ອງຕາມກົດໝາຍ ຢູ່ສປປລາວ ມີສິດໄດ້ຮັບນະໂຍບາຍສົ່ງເສີມການລົງທຶນ ຕາມກົດໝາຍ ແລະ ລັດຖະບັນຍັດ ສະບັບນີ້.

ລັດຖະບານ ສປປລາວ ມອບສິດ ແລະ ຄວາມຮັບຜິດຊອບ ໃຫ້ຄະນະຄຸ້ມຄອງ ການລົງທຶນຮ່ວມມືກັບຕ່າງປະເທດ ແລະ ລົງທຶນພາຍໃນ (ຄລຮ) ເປັນຜູ້ພິຈາລະນາ ຕົກລົງໃຫ້ນະໂຍບາຍສົ່ງເສີມການລົງທຶນ.

<u>ມາດຕາ 3</u>: **ການຂໍນະໂຍບາຍສົ່ງເສີມການລົງທຶນ**

3.1 ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຢາກ ຂໍນະໂຍບາຍສົ່ງເສີມການລົງທຶນ ຕ້ອງປະກອບສຳນວນເອກະສານ ຍື່ນຕໍ່ ຄະນະຄຸ້ມຄອງການລົງທຶນ ຮ່ວມມືກັບ ຕ່າງປະເທດ ແລະ ລົງທຶນພາຍໃນ (ຄລຮ) ເພື່ອຄົ້ນຄ້ວາພິຈາລະນາ.

3.2 ສຳນວນເອກະສານ ຂໍນະໂຍບາຍສົ່ງເສີມການລົງທຶນ ປະກອບມີ:

1. ໃບຄຳຮ້ອງ,
2. ສຳເນົາໃບອະນຸຍາດລົງທຶນ, ໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນ,
3. ສຳເນົາບົດວິພາກເສດຖະກິດ ຫລື ແຜນການຜະລິດທຸລະກິດ ທີ່ໄດ້ຮັບການຢັ້ງຢືນ ຈາກຂະແໜງການກ່ຽວຂ້ອງ. ໃນກໍລະນີ ທີ່ໂຄງການມີສັນຍາກັບລັດຖະບານ ແຫ່ງ ສປປລາວ ແລ້ວ, ຄລຮ ຈະພິຈາລະນາໃຫ້ນະໂຍບາຍສົ່ງເສີມການລົງທຶນ ແກ່ໂຄງການດັ່ງກ່າວຕາມ ທີ່ລະບຸໄວ້ໃນສັນຍາ.

<u>ມາດຕາ 4</u>: **ການພິຈາລະນາ ໃຫ້ນະໂຍບາຍສົ່ງເສີມການລົງທຶນ**

ພາຍຫລັງໄດ້ຮັບສຳນວນເອກະສານ ຂໍນະໂຍບາຍສົ່ງເສີມການລົງທຶນ ຢ່າງຄົບຖ້ວນແລ້ວ, ຄລຮ ຈະໄດ້ ຄົ້ນຄວ້າ ແລະ ຕອບໃຫ້ຜູ້ລົງທຶນຊາບ ພາຍໃນ 15 ວັນລັດຖະການ ນັບແຕ່ມື້ໄດ້ຮັບສຳນວນເອກະສານ.

## ໝວດທີ II
## ນະໂຍບາຍສົ່ງເສີມການລົງທຶນ

<u>ມາດຕາ 5</u>: **ເງື່ອນໄຂ ການໃຫ້ນະໂຍບາຍສົ່ງເສີມການລົງທຶນ**

ລັດຖະບານ ສປປລາວ ມອບໃຫ້-ຄລຮ ພິຈາລະນາ ໃຫ້ນະໂຍບາຍສົ່ງເສີມການລົງທຶນ ໂດຍອີງໃສ່ເງື່ອນໄຂ ຂອງເຂດ, ກິດຈະການ ແລະ ມູນຄ່າຂອງການລົງທຶນ.

<u>ມາດຕາ 6</u>: **ການກຳນົດເຂດສົ່ງເສີມການລົງທຶນ**

ລັດຖະບານ ສປປລາວ ເປັນຜູ້ກຳນົດ ເຂດສົ່ງເສີມການລົງທຶນ ໂດຍອີງຕາມທີ່ຕັ້ງພູມສາດ ແລະ ສະພາບເສດຖະກິດ-ສັງຄົມ ຂອງເຂດ ໃນແຕ່ລະໄລຍະ ແລະ ແບ່ງເປັນ 3 ເຂດ ຄື:

6.1 **ເຂດ I**: ແມ່ນເຂດພູດອຍ, ພູພຽງ, ທົ່ງພຽງ, ຫ່າງໄກສອກຫລີກ ທີ່ບໍ່ທັນມີ ພື້ນຖານໂຄງລ່າງເສດຖະກິດ ເອື້ອອຳນວຍແກ່ການລົງທຶນ.

6.2 **ເຂດ II**: ແມ່ນເຂດພູດອຍ, ພູພຽງ, ທົ່ງພຽງ ທີ່ມີພື້ນຖານໂຄງລ່າງເສດຖະກິດສາມາດຮອງຮັບການລົງທຶນ ໄດ້ສ່ວນໃດສ່ວນໜຶ່ງແລ້ວ.

6.3 **ເຂດ III**: ແມ່ນບັນດາເມືອງ ຢູ່ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ທີ່ມີພື້ນຖານໂຄງລ່າງເສດຖະກິດ ຮອງຮັບການລົງທຶນ ໄດ້ດີແລ້ວ.

ບັນຊີການແບ່ງເຂດສົ່ງເສີມການລົງທຶນ ໄດ້ລະບຸລະອຽດ ຢູ່ໃນເອກະສານຄັດຕິດ 1.

<u>ມາດຕາ 7:</u> **ການກຳນົດໂຄງການ ແລະ ກິດຈະການສົ່ງເສີມການລົງທຶນ**

ໂຄງການສົ່ງເສີມລົງທຶນພາຍໃນ ແລະ ຕ່າງປະເທດ ແມ່ນໂຄງການລົງທຶນໃສ່ ບັນດາຂະແໜງການຕ່າງໆ ຕາມບັນຊີໂຄງການບຸລິມະສິດ ສຳລັບການລົງທຶນພາຍໃນ ແລະ ບັນຊີສົ່ງເສີມ ການລົງທຶນຕ່າງປະເທດ ທີ່ລັດຖະບານ ສປປລາວ ເປັນຜູ້ກຳນົດໄວ້. ບັນຊີເຫຼົ່ານັ້ນ ມີຢູ່ໃນ ເອກະສານຄັດຕິດ 2.

## ໝວດທີ III
## ນະໂຍບາຍດ້ານພາສີ-ອາກອນ

<u>ມາດຕາ 8:</u> **ນະໂຍບາຍ ຍົກເວັ້ນພາສີ-ອາກອນ ການນຳເຂົ້າວັດຖຸອຸປະກອນ ສຳລັບການກໍ່ສ້າງ ໂຮງງານ ແລະ ເຄື່ອງຈັກເພື່ອທຳການຜະລິດ**

8.1 ການນຳເຂົ້າວັດສະດຸກໍ່ສ້າງ ແລະ ອຸປະກອນ ທີ່ບໍ່ມີ ຢູ່ພາຍໃນປະເທດ ຫລື ບໍ່ສາມາດຈັດຊື້ໄດ້ພາຍໃນປະເທດ ຫລື ມີແຕ່ບໍ່ພຽງພໍກັບຄວາມຕ້ອງການ ແມ່ນຈະໄດ້ຮັບອະນຸຍາດໃຫ້ນຳເຂົ້າ ສະເພາະ ເພື່ອການກໍ່ສ້າງໂຮງງານ, ຕຶກອາຄານ ແລະ ສິ່ງປຸກສ້າງ ທີ່ເປັນຊັບສິນຄົງທີ່ ຂອງ ວິສາຫະກິດເທົ່ານັ້ນ ໂດຍອີງໃສ່ແບບ, ແຜນຜັງ, ໃບຄິດໄລ່ບໍລິມາດວຽກ ຂອງການກໍ່ສ້າງ ທີ່ໄດ້ຮັບຮອງເອົາ ໂດຍຂະແໜງ ຄຂປກ.

8.2 ການນຳເຂົ້າເຄື່ອງຈັກການຜະລິດ ແມ່ນຈະໄດ້ຮັບອະນຸຍາດ ໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງໂຄງການ, ຕາມບົດວິພາກເສດຖະກິດເຕັກນິກ ແລະ ບົນພື້ນຖານ ການເຫັນດີ ຂອງຂະແໜງການທີ່ກ່ຽວຂ້ອງ.

<u>ມາດຕາ 9:</u> **ນະໂຍບາຍ ຍົກເວັ້ນພາສີ-ອາກອນ ການນຳເຂົ້າວັດຖຸດິບ ແລະ ຜະລິດຕະພັນ ເຄິ່ງສຳເລັດຮູບ**

9.1 ການນຳເຂົ້າວັດຖຸດິບ ແລະ ຜະລິດຕະພັນເຄິ່ງສຳເລັດຮູບ ທີ່ບໍ່ມີຢູ່ພາຍໃນປະເທດ ໂດຍມີ ການຢັ້ງຢືນ ຂອງຂະແໜງການກ່ຽວຂ້ອງ,ຈະໄດ້ຮັບອະນຸຍາດໃຫ້ນຳເຂົ້າ ໂດຍຍົກເວັ້ນ ພາສີ-ອາກອນ.

9.2 ວັດຖຸດິບ ແລະ ຜະລິດຕະພັນເຄິ່ງສຳເລັດຮູບ ທີ່ມີຢູ່ພາຍໃນ ແຕ່ບໍ່ພຽງພໍ ຫຼື ບໍ່ທັນໄດ້ມາດຕະຖານ ເພື່ອທຳການປຸງແຕ່ງ, ປະກອບ ຫຼື ຜະລິດເປັນສິນຄ້າ ເພື່ອທົດແທນການນຳເຂົ້ານັ້ນ ແມ່ນຈະໄດ້ຮັບອະນຸຍາດ ໃຫ້ນຳເຂົ້າ ໂດຍຍົກເວັ້ນພາສີ-ອາກອນ ພາຍໃນໄລຍະຫ້າ (05) ປີ ນັບແຕ່ມື້ໄດ້ຮັບໃບຢັ້ງຢືນ ສົ່ງເສີມການລົງທຶນເປັນຕົ້ນໄປ, ຫລັງຈາກນັ້ນຕ້ອງໄດ້ປະຕິບັດຕາມກົດໝາຍ ພາສີ-ອາກອນ ຂອງ ສປປ ລາວ.

9.3 ບໍລິມາດການນຳເຂົ້ານັ້ນ ຈະໄດ້ຮັບອະນຸຍາດ ໂດຍອີງຕາມແຜນຄວາມຕ້ອງການຕົວຈິງ ຂອງການຜະລິດປະຈຳປີ ທີ່ຂະແໜງການທີ່ກ່ຽວຂ້ອງ ໄດ້ຮັບຮອງເອົາ ບົນພື້ນຖານການສະຫລຸບ ສັງລວມການນຳໃຊ້ປະຈຳປີ.

<u>ມາດຕາ 10:</u> **ນະໂຍບາຍຍົກເວັ້ນ ພາສີ-ອາກອນການ ນຳເຂົ້າອຸປະກອນ ແລະ ອາໄຫຼ່ເຄື່ອງຈັກ**

10.1 ການນຳເຂົ້າອຸປະກອນ ແລະ ອາໄຫຼ່ເຄື່ອງຈັກ ທີ່ມີຢູ່ໃນແຜນການນຳເຂົ້າປະຈຳປີ ທີ່ໄດ້ຮັບການຢັ້ງຢືນ ຈາກຂະແໜງການກ່ຽວຂ້ອງແລ້ວນັ້ນ ຈະໄດ້ຮັບອະນຸຍາດ ໃຫ້ນຳເຂົ້າ ໂດຍຍົກເວັ້ນພາສີ-ອາກອນ .

10.2 ກໍລະນີສຸກເສີນ ແລະ ວິສາຫະກິດ ຈຳເປັນຕ້ອງການນຳເຂົ້າ ອຸປະກອນ ແລະ ອາໄຫຼ່ເຄື່ອງຈັກຮັບໃຊ້ການຜະລິດ ມີມູນຄ່າຕໍ່າກວ່າ 10.000 (ສິບພັນ) ໂດລາສະຫະລັດ ລົງມາ ທີ່ບໍ່ນອນ ຢູ່ໃນແຜນການນຳເຂົ້າປະຈຳປີນັ້ນ, ວິສາຫະກິດຈະຕ້ອງມີເອກະສານຢັ້ງຢືນຄວາມຈຳເປັນ ຈາກຂະແໜງ ການກ່ຽວຂ້ອງເສັຍກ່ອນ ຈຶ່ງຈະໄດ້ຮັບການພິຈາລະນາ ອະນຸຍາດ ໃຫ້ນຳເຂົ້າໂດຍຍົກເວັ້ນພາສີ-ອາກອນ.

**ມາດຕາ 11: ນະໂຍບາຍຍົກເວັ້ນພາສີ-ອາກອນ ການນຳເຂົ້າອຸປະກອນຮັບໃຊ້ ທີ່ເປັນຊັບສິນບັດຄົງທີ່**

ອຸປະກອນຮັບໃຊ້ ທີ່ນຳເຂົ້າມາປະກອບເປັນຊັບສິນບັດຄົງທີ່ ຂອງ ວິສາຫະກິດ ຈະໄດ້ຮັບການພິຈາລະນາອະນຸມັດ ໃຫ້ນຳເຂົ້າ ໂດຍຍົກເວັ້ນພາສີ-ອາກອນ ໄດ້ພຽງຄັ້ງດຽວ ຕາມ ບົດວິພາກເສດຖະກິດ ແລະ ແຜນຄວາມຕ້ອງການ ທີ່ຮັບຮອງເອົາໂດຍ ຂະແໜງການກ່ຽວຂ້ອງ.

**ມາດຕາ 12: ນະໂຍບາຍຍົກເວັ້ນພາສີ-ອາກອນ ການນຳເຂົ້າ ຍານພາຫະນະຮັບໃຊ້ການຜະລິດໂດຍກົງ**

ຍານພາຫະນະ ທີ່ຮັບໃຊ້ໃຫ້ແກ່ການຜະລິດໂດຍກົງ ເຊັ່ນ: ລົດບັນທຸກ, ລົດບຸກເບີກດິນ, ລົດຂົນສົ່ງສິນຄ້າ, ຂົນສົ່ງຜູ້ໂດຍສານ, ລົດວິຊາສະເພາະ ແລະ ລົດຮັບໃຊ້ການກໍ່ສ້າງ ຈະໄດ້ຮັບອະນຸຍາດໃຫ້ນຳເຂົ້າ ໂດຍຍົກເວັ້ນພາສີ-ອາກອນ. ຈຳນວນທີ່ຈະໄດ້ຮັບອະນຸຍາດ ຍົກເວັ້ນພາສີ-ອາກອນ ການນຳເຂົ້າ ນັ້ນຕ້ອງ ໃຫ້ ເໝາະສົມກັບຂະໜາດທຶນ ແລະ ບໍລິມາດວຽກງານ ໂດຍອີງໃສ່ບົດວິພາກເສດຖະກິດ-ເຕັກນິກ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງແຕ່ລະໂຄງການ ທີ່ຮັບຮອງເອົາໂດຍ ຂະແໜງການກ່ຽວຂ້ອງ.

**ມາດຕາ 13: ນະໂຍບາຍພາສີ-ອາກອນ 1% ການນຳເຂົ້າຍານພາຫະນະ ຮັບໃຊ້ການຜະລິດທາງອ້ອມ**

ພາຫະນະ ທີ່ຮັບໃຊ້ການຜະລິດທາງອ້ອມ ເຊັ່ນ: ລົດເກັ໋ງ, ລົດກະບະ, ລົດຕູ້ 07 ບ່ອນນັ່ງລົງມາ, ລົດຈິບ ແລະ ພາຫະນະຮັບໃຊ້ບໍລິຫານ ນອກຈາກ ທີ່ໄດ້ລະບຸໄວ້ໃນ ມາດຕາ 12 ຂ້າງເທິງນີ້, ຄລຂ ຈະໄດ້ພິຈາລະນາອະນຸຍາດໃຫ້ນຳເຂົ້າ ໂດຍເສຍພາສີ-ອາກອນ ຂາເຂົ້າ 1% ຕາມເງື່ອນໄຂດັ່ງລຸ່ມນີ້:

I. <u>ສຳລັບການລົງທຶນພາຍໃນ:</u>

| ເຂດລົງທຶນ | ທຶນຈົດທະບຽນຕ່ຳສຸດ (ກີບ) | ຈຳນວນລົດ |
|---|---|---|
| ເຂດ I | 1 ຕື້ | 01 ຄັນ |
| | 10 ຕື້ | 02 ຄັນ |
| ເຂດ II | 2.5 ຕື້ | 01 ຄັນ |
| | 20 ຕື້ | 02 ຄັນ |
| ເຂດ III | 3 ຕື້ | 01 ຄັນ |
| | 35 ຕື້ | 02 ຄັນ |

II. <u>ສຳລັບການລົງທຶນຕ່າງປະເທດ</u>

| ເຂດລົງທຶນ | ທຶນຈົດທະບຽນຕ່ຳສຸດ (ໂດລາສະຫະລັດ) | ຈຳນວນລົດ |
|---|---|---|
| ເຂດ I | 200.000 | 01 ຄັນ |
| | 2.000.000 | 02 ຄັນ |
| ເຂດ II | 300.000 | 01 ຄັນ |
| | 3.000.000 | 02 ຄັນ |
| ເຂດ III | 400.000 | 01 ຄັນ |
| | 5.000.000 | 02 ຄັນ |

- ນອກຈາກທີ່ໄດ້ກຳນົດຂ້າງເທິງນີ້ແລ້ວ ຖ້າຫາກບໍ່ພຽງພໍກັບຄວາມຕ້ອງການ ນຳໃຊ້ຕົວຈິງ ຄລຮ ຈະພິຈາລະນາ ອະນຸມັດນຳເຂົ້າມາເພີ່ມເຕີມອີກ ໂດຍໃຫ້ເສຍພາສີ-ອາກອນ ການນຳເຂົ້າ ເຕັມອັດຕາ ຕາມລະບຽບການ ຂອງ ສປປລາວ.

**ມາດຕາ 14: ນະໂຍບາຍ ການນຳເຂົ້າຊົ່ວຄາວ**

- ວິສາຫະກິດພາຍໃນ ແລະ ຕ່າງປະເທດ ທີ່ມີສັນຍາ ກັບລັດຖະບານ ຫຼື ຂັ້ນແຂວງ, ກຳແພງນະຄອນ ແລະ ເຂດພິເສດ ເຊັ່ນ: ບົດບັນທຶກຄວາມເຂົ້າໃຈ, ສັນຍາສຳປະທານ, ສັນຍາສຳຫລວດ, ສັນຍາພັດທະນາໂຄງການ, ສັນຍາກໍ່ສ້າງ ຫຼື ສັນຍາຜູກພັນອື່ນໆ, ຄລຮ ຈະພິຈາລະນາອະນຸຍາດໃຫ້ນຳເຂົ້າຊົ່ວຄາວ ເຄື່ອງມື ອຸປະກອນຮັບໃຊ້, ກົນຈັກໜັກ, ຍານພາຫະນະ ທີ່ຮັບ ໃຊ້ໂຄງການ ຕາມກຳນົດທີ່ລະບຸໄວ້ ໃນສັນຍາ. ສ່ວນຈຳນວນ ທີ່ຈະໄດ້ຮັບອະນຸຍາດໃຫ້ນຳ ເຂົ້ານັ້ນ ຂະແໜງການກ່ຽວຂ້ອງ ຈະເປັນຜູ້ກຳນົດ ໂດຍອີງຕາມ ຂະໜາດທຶນ, ບໍລິມາດວຽກງານ ແລະ ຄວາມຮຽກຮ້ອງ ຕ້ອງການ ຕົວຈິງ ຂອງ ແຕ່ລະໂຄງການ.
- ຫ້ອງການຜູ້ຕາງໜ້າ ຂອງວິສາຫະກິດຕ່າງປະເທດ ທີ່ມີສັນຍາຜູກພັນກັບລັດຖະບານ, ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ເຊັ່ນ: ບົດບັນທຶກຄວາມເຂົ້າໃຈ, ສັນຍາສຳປະທານ, ສັນຍາສຳຫລວດ, ສັນຍາພັດທະນາໂຄງການ ຫຼື ສັນຍາຜູກພັນອື່ນໆ, ຄລຮ ຈະພິຈາລະນາອະນຸຍາດ ໃຫ້ນຳເຂົ້າຊົ່ວຄາວ ກຳນົດ 01 ປີ ພາຫະນະຮັບໃຊ້ບໍລິຫານ ຈຳນວນ 01 ຄັນ ເພື່ອມາຮັບໃຊ້ວຽກງານ ຕາມທີ່ລະບຸໄວ້ໃນສັນຍາ.

**ມາດຕາ 15: ນະໂຍບາຍນຳຍານພາຫະນະ ເຂົ້າມາທົດແທນ**

ຄລຮ ຈະພິຈາລະນາອະນຸຍາດ ໃຫ້ຂາຍຍານພາຫະນະຄັນເກົ່າ ທີ່ມີອາຍຸການນຳເຂົ້າ ແຕ່ 05 ປີຂຶ້ນໄປ ຫຼື ບໍ່ທັນເຖິງ 05 ປີ ແຕ່ມີຄວາມເປເພ່ເສຍຫາຍ ຈົນໃຊ້ການບໍ່ໄດ້ ໂດຍມີ ການຢັ້ງຢືນທາງດ້ານເຕັກນິກ ຈາກເຈົ້າໜ້າທີ່ ຂະແໜງການກ່ຽວຂ້ອງ ແລະ ຈະອະນຸມັດ ໃຫ້ນຳເຂົ້າຍານພາຫະນະໃໝ່ ມາທົດແທນ ຄັນເກົ່າ ດ້ວຍການເສຍພາສີ-ອາກອນ ຂາເຂົ້າ 1% ສຳລັບຍານພາຫະນະ ທີ່ລະບຸໄວ້ໃນ ມາດຕາ 13, ສ່ວນຍານພາຫະນະ ທີ່ລະບຸໄວ້ ໃນມາດຕາ 12 ນັ້ນ ຈະໄດ້ຖືກຍົກເວັ້ນ ພາສີ-ອາກອນຂາເຂົ້າ.

**ມາດຕາ 16: ນະໂຍບາຍນຳເຂົ້າຍານພາຫະນະ ຂອງວິສາຫະກິດ ທີ່ໃຫ້ການບໍລິການ**

ຄລຮ ຈະພິຈາລະນາ ອະນຸມັດໃຫ້ວິສາຫະກິດ ທີ່ດຳເນີນກິດຈະການ ດ້ານການບໍລິການ ນຳເຂົ້າຍານພາຫະນະ ດ້ວຍການເສຍພາສີພາສີ-ອາກອນ ໃນອັດຕາຫຼຸດຜ່ອນ ດັ່ງນີ້:

| ຂະແໜງການ | ອັດຕາພາສີທີ່ຕ້ອງຈ່າຍ ທຽບໃສ່ມູນຄ່ານຳເຂົ້າ | ຈຳນວນພາຫະນະ ທີ່ຈະໄດ້ຮັບອະນຸຍາດ | ປະເພດພາຫະນະ |
|---|---|---|---|
| ໂຮງແຮມ | 20% | 15-50 ຫ້ອງນອນ 01 ຄັນ<br>51-100 ຫ້ອງນອນ 02 ຄັນ<br>101 ຫ້ອງນອນຂຶ້ນໄປ 03 ຄັນ | ລົດຕູ້ ໃໝ່ 100% |
| ທ່ອງທ່ຽວ | 30% | ໃຫ້ອີງຕາມທຶນຈົດທະບຽນ ຂອງບໍລິສັດ. ລາຍລະອຽດຈະ ໄດ້ກຳນົດອອກ ຢູ່ໃນບົດແນະ ນຳກ່ຽວກັບ ການຈັດຕັ້ງປະຕິບັດ ລັດຖະບັນຍັດ ສະບັບນີ້. | ລົດຕູ້ ໃໝ່ 100% |
| ບໍລິການລົດແທກຊີ-ລົດໃຫ້ເຊົ່າ | 30% | | ລົດໃໝ່ 100% |
| ໃຫ້ເຊົ່າກົນຈັກໜັກ | 1% | | |

## ໝວດທີ IV

## ນະໂຍບາຍດ້ານອາກອນກຳໄລ

<u>ມາດຕາ 17:</u> ໄລຍະຍົກເວັ້ນ ແລະ ການຫຼຸດຜ່ອນ ອັດຕາອາກອນກຳໄລ ຕາມເຂດລົງທຶນ

ບັນດາວິສາຫະກິດ ທີ່ລົງທຶນໃນກິດຈະການສົ່ງເສີມ (ທີ່ລະບຸໄວ້ໃນ ມາດຕາ7 ຂອງລັດຖະບັນຍັດລະບັບນີ້) ຕາມເຂດຕ່າງໆ (ທີ່ລະບຸໄວ້ໃນ ມາດຕາ6 ຂອງລັດຖະບັນຍັດລະບັບນີ້) ຈະໄດ້ຮັບນະໂຍບາຍຫຼຸດຜ່ອນ ແລະ ຍົກເວັ້ນອາກອນກຳໄລ ຕາມທີ່ລະບຸໄວ້ ໃນໃບຢັ້ງຢືນ ສົ່ງເສີມ ການລົງທຶນ ຊຶ່ງມີເງື່ອນໄຂລາຍລະອຽດຢູ່ ຕາຕະລາງລຸ່ມນີ້.

I. <u>ສຳລັບການລົງທຶນພາຍໃນ:</u>

| ເຂດລົງທຶນ | ທຶນຈົດທະບຽນຕ່ຳສຸດ (ກີບ) | ໄລຍະຍົກເວັ້ນ ອາກອນກຳໄລ | ອັດຕາ ອາກອນກຳໄລ |
|---|---|---|---|
| ເຂດ I | 2 ຕື້ | 01 ປີ | 10% |
| | 10 ຕື້ | 03 ປີ | 10% |
| | 20 ຕື້ | 05 ປີ | 10% |
| ເຂດ II | 5 ຕື້ | 01 ປີ | 15% |
| | 15 ຕື້ | 03 ປີ | 15% |
| | 35 ຕື້ | 05 ປີ | 15% |
| ເຂດ III | 10 ຕື້ | 02 ປີ | 20% |
| | 25 ຕື້ | 03 ປີ | 20% |
| | 45 ຕື້ | 05 ປີ | 20% |

III. <u>ສຳລັບການລົງທຶນຕ່າງປະເທດ:</u>

| ເຂດລົງທຶນ | ທຶນຈົດທະບຽນຕ່ຳສຸດ | ໄລຍະຍົກເວັ້ນ ອາກອນກຳໄລ | ອັດຕາ ອາກອນກຳໄລ |
|---|---|---|---|
| ເຂດ I | 100.000 ໂດລາ | 01 ປີ | 10% |
| | 500.000 ໂດລາ | 02 ປີ | 10% |
| | 1.000.000 ໂດລາ | 04 ປີ | 10% |
| ເຂດ II | 200.000 ໂດລາ | 01 ປີ | 15% |
| | 2.500.000 ໂດລາ | 04 ປີ | 15% |
| | 4.500.000 ໂດລາ | 05 ປີ | 15% |
| ເຂດ III | 500.000 ໂດລາ | 02 ປີ | 20% |
| | 5.500.000 ໂດລາ | 06 ປີ | 20% |
| | 10.000.000 ໂດລາ | 07 ປີ | 20% |

## ໝວດທີ V
## ການຕິດຕາມກວດກາ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 18: ການຕິດຕາມກວດກາ**

ຄລຮ ມີສິດ ແລະ ໜ້າທີ່ສົມທົບ ກັບບັນດາຂະແໜງການຕ່າງໆ ທີ່ກ່ຽວຂ້ອງ ເພື່ອລົງຊຸກຍູ້ ຕິດຕາມກວດກາການດຳເນີນງານ ຂອງຜູ້ລົງທຶນ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ຂອງ ສປປລາວ. ມາດຕະຖານ ແລະ ເງື່ອນໄຂ ນະໂຍບາຍສົ່ງເສີມການລົງທຶນ ທີ່ຜູ້ລົງທຶນໄດ້ຮັບ.

**ມາດຕາ 19: ການສະຫລຸບລາຍງານ ການປະຕິບັດໂຄງການ**

ບັນດາວິສາຫະກິດ ທີ່ໄດ້ຮັບນະໂຍບາຍສົ່ງເສີມການລົງທຶນ ຕ້ອງລາຍງານກ່ຽວກັບ ການຈັດຕັ້ງປະຕິບັດໂຄງການລົງທຶນ ແຕ່ລະໄລຍະ ເປັນລາຍລັກອັກສອນ ໃຫ້ ຄລຮ ຊາບຕາມແບບຟອມ ລາຍງານ ທີ່ ຄລຮ ໄດ້ກຳນົດໄວ້.

**ມາດຕາ 20: ມາດຕະການ ຕໍ່ຜູ້ລະເມີດ**

1. ບຸກຄົນ, ວິສາຫະກິດ ຫຼື ອົງການຈັດຕັ້ງໃດ ທີ່ລະເມີດ ຫຼື ສວຍໃຊ້ລັດຖະບັນຍັດສະບັບນີ້ ໄປໃນທາງທີ່ບໍ່ຖືກຕ້ອງ ຈະຖືກຕັກເຕືອນ, ສຶກສາອົບຮົມ, ປັບໄໝ ຫຼື ດຳເນີນຄະດີ ຕາມກົດໝາຍ ຂອງ ສປປລາວ ແລ້ວແຕ່ກໍລະນີໜັກ ຫຼື ເບົາ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 21:** ມອບໃຫ້ບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາແຂວງ, ກຳແພງນະຄອນ, ເຂດພິເສດ ແລະ ທົ່ວໜ່ວຍວິສາຫະກິດຕ່າງໆ ຂອງການລົງທຶນພາຍໃນ ແລະຕ່າງປະເທດ ຢູ່ ສປປ ລາວ ຈົ່ງປະຕິບັດຕາມລັດຖະບັນຍັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 22:** ລັດຖະບັນຍັດ ສະບັບນີ້ ມີຜົນບັງຄັບໃຊ້ ຫຼັງຈາກມື້ລົງລາຍເຊັນ 45 ວັນ ເປັນຕົ້ນໄປ.

ວຽງຈັນ, ວັນທີ 05 ມິຖຸນາ 2003.

ປະທານປະເທດ ແຫ່ງ ສປປ ລາວ

ຄຳໄຕ ສີພັນດອນ